ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ....0388......../ຜ-ຟຟລ.

ນະຄອນຫລວງວຽງຈັນ, ວັນທີ...15 FEB 2019...

# **<u>ແຈ້ງການ</u>**

ຮຽນ: ບັນດາທ່ານຜູ້ຖືຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ຜົນສຳເລັດການຮັບໂອນຮຸ້ນຂອງເຂື່ອນໄຟຟ້າ ໄຊຍະບູລີ ແລະ ເຂື່ອນໄຟຟ້າ ດອນສາໂຮງ.

- ອີງຕາມ ການແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 3/2017 ກ່ຽວກັບການອະນຸມັດການຮັບໂອນຮຸ້ນສາມັນ ໃນໂຄງການຜູ້ຜະລິດໄຟຟ້າເອກະລາດ ຈາກລັດວິສາຫະກິດໄຟຟ້າລາວ ສະບັບເລກທີ: 1863/ຜ-ຟຟລ, ລົງວັນທີ່ 25/ 09 /2017.

ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງໃຫ້ບັນດາທ່ານ ຊາບກ່ຽວກັບຜົນສຳເລັດການຮັບໂອນຮຸ້ນສາມັນຂອງເຂື່ອນໄຟຟ້າ ໄຊຍະບູລີ ແລະ ເຂື່ອນໄຟຟ້າ ດອນສາໂຮງ ລາຍລະອຽດມີດັ່ງລຸ່ມນີ້:

1. ເຂື່ອນໄຟຟ້າ ໄຊຍະບູລີ: ຜ-ຟຟລ ໄດ້ເຂົ້າຖືຮຸ້ນ 20 % ຄິດເປັນກຳລັງການຜະລິດໃນສ່ວນຂອງການຖືຮຸ້ນເທົ່າກັບ 257 ເມກາວັດ.
2. ເຂື່ອນໄຟຟ້າ ດອນສາໂຮງ: ຜ-ຟຟລ ໄດ້ເຂົ້າຖືຮຸ້ນ 20 % ຄິດເປັນກຳລັງການຜະລິດໃນສ່ວນຂອງການຖືຮຸ້ນເທົ່າກັບ 52 ເມກາວັດ.

ມາຮອດປະຈຸບັນນີ້ການຮັບໂອນ 02 ເຂື່ອນດັ່ງກາວຈາກ ລັດວິສາຫະກິດໄຟຟ້າລາວ ໄດ້ສຳເລັດ ຕາມລະບຽບກົດໝາຍເປັນທີ່ຮຽບຮ້ອຍແລ້ວ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

<u>ຜູ້ອຳນວຍການໃຫຍ່</u>

ກະຊວງ ພະລັງງານ ແລະ ບໍ່ແຮ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນຫຼວງວຽງຈັນ

**ທອງເພັດ ດວງເງິນ**

**ຮອງຜູ້ອຳນວຍການໃຫຍ່**

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la

Anita